ກະຊວງອຸດສາຫະກຳ ແລະ ການຄ້າ
ກົມແຜນການ ແລະ ການຮ່ວມມື
ຂາເຂົ້າ | ເລກທີ 691
| ວັນທີ 8-7-14

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ | ເລກທີ 1199 / ອຄ.ຫຄວ

ນະຄອນຫຼວງວຽງຈັນ, ວັນທີ 04 ກໍລະກົດ 2014

# ແຈ້ງການ

ເຖິງ: - ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ

- ຜູ້ລົງທຶນພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງຢາກສ້າງຕັ້ງວິສາຫະກິດ

ເລື່ອງ: ການຂຶ້ນທະບຽນວິສາຫະກິດ ໃນທຸລະກິດທີ່ປຶກສາດ້ານຕ່າງໆ

ເພື່ອແກ້ໄຂສະພາບ ແລະ ສະກັດກັ້ນ ຜົນເສຍຫາຍທີ່ເກີດຈາກການສວຍໃຊ້ຊື່ປະເພດທຸລະກິດທີ່ປຶກສາໃນໃບທະບຽນວິສາຫະກິດ ເພື່ອດຳເນີນທຸລະກິດ ໂດຍບໍ່ສອດຄ່ອງກັບວັດຖຸປະສົງດັ່ງທີ່ກຳລັງເກີດຂຶ້ນ ແຜ່ຫຼາຍໃນປະຈຸບັນ, ກະຊວງອຸດສາຫະກຳ ແລະ ການຄ້າ ແຈ້ງມາຍັງພາກສ່ວນທີ່ກ່ຽວຂ້ອງຊາບ ແລະ ຈັດຕັ້ງປະຕິບັດ ດັ່ງນີ້:

1. ການດຳເນີນທຸລະກິດທີ່ປຶກສາ ຫລື ທຸລະກິດບໍລິການໃຫ້ຄຳປຶກສາໃນທຸກດ້ານ ຕ້ອງມາແຈ້ງຂຶ້ນທະບຽນວິສາຫະກິດ ນຳເຈົ້າໜ້າທີ່ທະບຽນວິສາຫະກິດ, ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ເທົ່ານັ້ນ ແລະ ໃຫ້ພະແນກອຸດສາຫະກຳ ແລະ ການຄ້າຂັ້ນແຂວງ ຢຸດເຊົາການພິຈາລະນາຂຶ້ນທະບຽນວິສາຫະກິດ (ຊົ່ວຄາວ) ໃນທຸລະກິດດັ່ງກ່າວນັບແຕ່ວັນທີ່ແຈ້ງການສະບັບນີ້ ໄດ້ລົງລາຍເຊັນເປັນຕົ້ນໄປ ຈົນກວ່າຈະມີແຈ້ງການເປັນຢ່າງອື່ນ;

2. ວິສາຫະກິດທີ່ປຶກສາ ທີ່ທາງພະແນກອຸດສາຫະກຳ ແລະ ການຄ້າ ຂັ້ນແຂວງໄດ້ຂຶ້ນທະບຽນວິສາຫະກິດໃຫ້ໃນໄລຍະທີ່ຜ່ານມາ ແມ່ນບໍ່ໃຫ້ລົບລ້າງ ແຕ່ໃຫ້ແຈ້ງລາຍຊື່ວິສາຫະກິດ ພ້ອມທັງອັດສຳເນົາໃບທະບຽນວິສາຫະກິດ ສົ່ງໃຫ້ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ຊ້າສຸດບໍ່ໃຫ້ເກີນທ້າຍເດືອນ 8 ປີ 2014 ນີ້;

3. ສຳລັບວິສາຫະກິດທີ່ປຶກສາ ທີ່ເຄື່ອນໄຫວທຸລະກິດ ນອກຂອບເຂດວັດຖຸປະສົງ ເຊັ່ນ ການອອກເຊັກ, ການຊື້-ຂາຍດັດສະນີ, ຮຸ້ນ, ຄຳ, ນ້ຳມັນ, ເງິນຕາ ແລະ ຜະລິດຕະພັນເງິນໃນຕະຫລາດເງິນຢູ່ຕ່າງປະເທດ, ການປ່ອຍເງິນ ຫລື ການເຄື່ອນໄຫວທຸລະກຳທາງດ້ານການເງິນຕ່າງໆ ແມ່ນໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ເກັບກຳສະພາບລະອຽດ ແລ້ວລາຍງານມາຍັງ ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ເພື່ອປະສານກັບພາກສ່ວນກ່ຽວຂ້ອງ ດຳເນີນມາດຕະການຢ່າງເຂັ້ມງວດ ຕາມກົດໝາຍ ຕໍ່ໄປ.

ແຈ້ງມາເພື່ອຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ

ເຈົ້າໜ້າທີ່ທະບຽນວິສາຫະກິດ

ເລກທີ 0450----/ຈທວ.ທຄວ

ນະຄອນຫຼວງວຽງຈັນ, ວັນທີ 04 ກໍລະກົດ 2014

ເຖິງ: - ບໍລິສັດ ທີ່ປຶກສາການເງິນພັດທະນາລາວ ຈຳກັດ, ໃບທະບຽນວິສາຫະກິດເລກທີ 0640/ ຈທວ, ລົງວັນທີ 24 ມິຖຸນາ 2013;

- ບໍລິສັດ ລາວ ແມັກສຕີ ທີ່ປຶກສາການລົງທຶນ ຈຳກັດຜູ້ດຽວ, ໃບທະບຽນວິສາຫະກິດ ເລກທີ 572/ຈທວ, ລົງວັນທີ 01 ມິຖຸນາ 2013;
- ບໍລິສັດ ທີເອັນເອັສ ຈະເລີນຊັບ ຈຳກັດຜູ້ດຽວ, ໃບທະບຽນວິສາຫະກິດເລກທີ 5334/ ຈທວ, ລົງວັນທີ 22 ຕຸລາ 2012.

ເລື່ອງ: ໃຫ້ຢຸດເຊົາການເຄື່ອນໄຫວທຸລະກິດ ນອກຂອບເຂດວັດຖຸປະສົງ

- ອີງຕາມກົດໝາຍວ່າດ້ວຍວິສາຫະກິດ, ສະບັບເລກທີ 11/ສພຊ, ລົງວັນທີ 9 ພະຈິກ 2005;

ອີງໃສ່ຫຼັກຖານຂໍ້ມູນທີ່ເກັບກຳໄດ້ ໂດຍສະເພາະແມ່ນຂໍ້ມູນຈາກຂະແໜງການທະນາຄານ, ເຈົ້າໜ້າທີ່ທະບຽນວິສາຫະກິດ (ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ) ແຈ້ງໃຫ້ວິສາຫະກິດທີ່ກ່ຽວຂ້ອງ ປະຕິບັດຢ່າງເຂັ້ມງວດ ແລະ ທັນທີ ດັ່ງນີ້:

1. ໃຫ້ຢຸດເຊົາການເຄື່ອນໄຫວທຸລະກິດ ທີ່ຢູ່ນອກຂອບເຂດວັດຖຸປະສົງ ຕາມທີ່ໄດ້ບົ່ງໄວ້ໃນໃບທະບຽນວິສາຫະກິດຂອງຕົນ ເປັນຕົ້ນແມ່ນ ການເຄື່ອນໄຫວທຸລະກຳທາງດ້ານການເງິນ ທຸກຮູບແບບ (ເຊັ່ນ: ການອອກເຊັກ, ການຊື້ - ຂາຍດັດສະນີ, ຮຸ້ນ, ຄຳ, ນ້ຳມັນ, ເງິນຕາ ແລະ ຜະລິດຕະພັນເງິນ ໃນຕະຫລາດເງິນຢູ່ຕ່າງປະເທດ, ການປ່ອຍເງິນ ຫລື ການເຄື່ອນໄຫວທຸລະກຳທາງດ້ານການເງິນຕ່າງໆ). ໃນກໍລະນີລະເມີດ ເຈົ້າໜ້າທີ່ທະບຽນວິສາຫະກິດ ຈະດຳເນີນມາດຕະການ ສັ່ງໂຈະການເຄື່ອນໄຫວທຸລະກິດ ຂອງວິສາຫະກິດທັງໝົດ;

2. ໃນກໍລະນີ ວິສາຫະກິດໃດໜຶ່ງ ມີຈຸດປະສົງດຳເນີນທຸລະກິດ ເພີ່ມເຕີມໃນປະເພດທຸລະກິດໃດໜຶ່ງ (ເຊັ່ນ ທຸລະກິດທາງດ້ານການເງິນ) ແມ່ນໃຫ້ມາປ່ຽນແປງເນື້ອໃນທະບຽນວິສາຫະກິດ ນຳເຈົ້າໜ້າທີ່ທະບຽນວິສາຫະກິດ (ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ) ໃຫ້ຖືກຕ້ອງ ຕາມຂັ້ນຕອນ ແລະ ລະບຽບການ.

ການຢຸດເຊົາການເຄື່ອນໄຫວທຸລະກິດນອກຂອບເຂດວັດຖຸປະສົງຕາມທີ່ກ່າວມາເທິງນີ້ ຈະບໍ່ເຮັດໃຫ້ຄວາມຮັບຜິດຊອບຕໍ່ການກະທຳຜິດໃນໄລຍະຜ່ານມາຕົກໄປ (ຖ້າມີ).

ແຈ້ງມາເພື່ອຊາບ ແລະ ປະຕິບັດຢ່າງເຂັ້ມງວດ.

ເຈົ້າໜ້າທີ່ທະບຽນວິສາຫະກິດ

ຮຸມແພງ ຄຳພາສິດ

Houmpheng KHAMPHASITH